ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ທຫລ.ຊຂ ຈັດພິທີປະກາດການຈັດຕັ້ງ ຂັ້ນຮອງຫົວໜ້າສາຂາ




ໃນວັນທີ 11 ມີນາ 2020 ທະນາຄານແຫ່ງ ສປປ ລາວ ສາຂາ ພາກເໜືອ ແຂວງ ຊຽງຂວາງ (ທຫລ.ຊຂ) ໄດ້ຈັດພິທີປະກາດການຈັ້ດຕັ້ງຂັ້ນຮອງຫົວໜ້າສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ ຂຶ້ນທີ່ຫ້ອງປະຊຸມ ທະນາຄານພັດທະນາລາວ ສາຂາຊຽງຂວາງ, ພາຍໃຕ້ການເປັນປະທານໂດຍ ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ. ພ້ອມນີ້, ກໍ່ມີທ່ານຫົວໜ້າສາຂາ ທຫລ.ຊຂ, ຮອງຫົວໜ້າກົມ, ຮອງຫົວໜ້າສາຂາ ທຫລ.ຊຂ, ຫົວໜ້າສາຂາທະນາຄານທຸລະກິດລັດ ພາຍໃນແຂວງຊຽງຂວາງ, ຄະນະພະແນກ ພ້ອມດ້ວຍພະນັກງານພາຍໃນ ທຫລ.ຊຂ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ທ່ານ ວິສອນ ໄຊສົງຄາມ ຫົວໜ້າສາຂາ ທຫລ.ຊຂ ໄດ້ຂຶ້ນຜ່ານບົດສະຫຼຸບການເຄື່ອນໄຫວວຽກງານທີ່ຜ່ານມາ: ທຫລ.ຊຂ ໄດ້ຖືເອົາການສຶກສາອົບຮົມການເມືອງແນວຄິດໃຫ້ແກ່ຖັນແຖວພະນັກງານ-ລັດຖະກອນ ເປັນບັນຫາຕົ້ນຕໍ ໂດຍຜ່ານຂະບວນການ ເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ, ໜ່ວຍພັກ, ການຈັດຕັ້ງລັດ ແລະ ໄດ້ຮ່ວມຊີວິດການເມືອງເປັນປົກກະຕິ ເພື່ອເຮັດໃຫ້ພະນັກງານ-ລັດຖະກອນ ມີແນວຄິດອຸ່ນອຽນ, ທຸ່ນທ່ຽງ, ເຊື່ອມຊຶມ ແລະ ເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ-ລັດ, ປະຕິບັດຕາມແບບແຜນວິທີເຮັດວຽກແບບລວມສູນປະຊາ ທິປະໄຕ, ຫ້າວຫັນຕໍ່ໜ້າທີ່ວຽກງານຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຕາມການມອບໝາຍຢ່າງຕັ້ງໜ້າ.

ມາຮອດປັດຈຸບັນ ທຫລ.ຊຂ ມີພະນັກງານທັງໝົດ 69 ຄົນ, ຍິງ 28 ຄົນ, ໃນນີ້, ມີສະມາຊິກພັກສົມບູນ 15 ສະຫາຍ, ສະມາຊິກກຳມະບານ 57 ສະຫາຍ, ສະມາຊິກຊາວໜຸ່ມ 55 ສະຫາຍ, ສະມາຊິກແມ່ຍິງ 25 ສະຫາຍ. ທຫລ.ຊຂ ໄດ້ຮັບການໃກ້ສິດຕິດແທດ ແລະ ຊີ້ນຳໂດຍກົງຈາກ ຄະນະພັກ-ຄະນະຜູ້ວ່າການ ທຫລ, ອຳນາດການປົກຄອງແຂວງທີ່ກ່ຽວຂ້ອງ, ບັນດາກົມພາຍໃນ ທຫລ, ບັນດາພະແນກອ້ອມຂ້າງ, ບັນດາທະນາຄານທຸລະກິດ, ສະຖາບັນການເງິນທີ່ຕັ້ງຢູ່ທ້ອງຖິ່ນທີ່ໄດ້ອຳນວຍຄວາມສະດວກໃນວຽກງານດ້ານຕ່າງໆເປັນຢ່າງດີ ແລະ ພະນັກງານມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ ຈຶ່ງເຮັດໃຫ້ ທຫລ.ຊຂ ສາມາດເຄື່ອນໄຫວປະຕິບັດວຽກງານໄປໄດ້ດ້ວຍດີ, ມີຄວາມຄ່ອງຕົວ ແລະ ໄດ້ຮັບຜົນສຳເລັດໃນຫຼາຍດ້ານ ໃນໄລຍະຜ່ານມາ.





ພ້ອມດຽວກັນນີ້, ທ່ານ ນາງ ໄກສອນ ໄຊຍະພອນ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ທຫລ ໄດ້ຂຶ້ນຜ່ານຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ສະບັບເລກທີ 164/ທຫລ, ລົງວັນທີ 03 ມີນາ 2020 ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງແຕ່ງຕັ້ງ ທ່ານ ນາງ ໜອມ ຫຼວງວິໄລ ຫົວໜ້າພະແນກສາງ-ຄັງເງິນສົດ, ສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ ເປັນຮອງຫົວໜ້າສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ.

ໃນຕອນທ້າຍພິທີ ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ຍ້ອງຍໍ ຊົມເຊີຍຕໍ່ກັບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ພ້ອມທັງໂອ້ລົມຕໍ່ບັນດາພະນັກງານ ໃຫ້ເອົາໃຈໃສ່ປະຕິບັດຢ່າງເຂັ້ມງວດຕໍ່ແບບແຜນວິທີເຮັດວຽກກໍ່ຄືຫຼັກການນຳພາຂອງພັກ ເຊິ່ງເປັນພື້ນຖານທີ່ສຳຄັນຂອງການນຳພາ, ຕ້ອງໄດ້ຄົ້ນຄວ້າແບ່ງງານ-ແບ່ງຄວາມຮັບຜິດຊອບໃຫ້ຈະແຈ້ງເໝາະສົມ, ກຳນົດກົນໄກການເຮັດວຽກໃຫ້ຄ່ອງຕົວ, ສ້າງສາຍພົວພັນອັນດີກັບບັນດາພະແນກການກໍ່ຄືອຳນາດການປົກຄອງທ້ອງຖິ່ນຂັ້ນຕ່າງໆ. ພ້ອມກັນນີ້, ປະຕິບັດລະບອບເຮັດວຽກການລາຍງານຕາມຂັ້ນຕາມສາຍງານ, ພະນັກງານຕ້ອງເຄົາລົບນັບຖືການຈັດຕັ້ງ, ຂັ້ນລຸ່ມຂຶ້ນກັບຂັ້ນເທິງ, ບຸກຄົນຂຶ້ນກັບການຈັດຕັ້ງ, ຫຼີກລ້ຽງການຖິ້ມຄວາມຮັບຜິດຊອບໃຫ້ກັນ ແລະ ກັນ ຫຼື ບ່າຍບ່ຽງໃນເວລາມີບັນຫາຕາມມາ ແລະ ຕັ້ງໜ້າປະຕິບັດລະບຽບລັດຖະກອນຍັງບໍ່ທັນເຂັ້ມງວດ.

**✍ ຂ່າວ + ພາບ: ສຸກສະຫວັນ ພົມມະວົງ**